**ມິຊຊາອາທິດທີ 5 ກຳນົດປາສກາ**

**ວັນທີ 15 ພຶດສະພາ 2022**



**ພຣະວໍລະສານໂດຍນັກບຸນຢວງ 13, 31-33ກ, 34-35**

ເມື່ອຢູດາອອກໜີໄປແລ້ວ, ພຣະເຢຊູເຈົ້າກ່າວວ່າ: ດຽວນີ້ບຸດແຫ່ງມະນຸດໄດ້ຮັບກຽດມຸງຄຸນແລ້ວ. ແລະພຣະເປັນເຈົ້າກໍໄດ້ຮັບກຽດມຸງຄຸນໃນບຸດແຫ່ງມະນຸດດ້ວຍ. ຖ້າພຣະເປັນເຈົ້າໄດ້ຮັບກຽດມຸງຄຸນໃນບຸດແຫ່ງມະນຸດ ພຣະເປັນເຈົ້າກໍຈະໃຫ້ກຽດບຸດແຫ່ງມະນຸດໃນພຣະອົງດ້ວຍ. ແລະພຣະອົງຈະໃຫ້ກຽດບຸດແຫ່ງມະນຸດໃນບໍ່ເທິງ.

ພວກລູກທີ່ຮັກ, ເຮົາຈະຢູ່ນຳພວກເຈົ້າອີກບໍ່ດົນນານ. ເຮົາມອບບັນຍັດໃໝ່ໃຫ້ພວກເຈົ້າຄືຈົ່ງຮັກກັນແລະກັນເໝືອນເຮົາໄດ້ຮັກພວກເຈົ້າ. ແມ່ນແລ້ວ, ພວກເຈົ້າຈົ່ງຮັກແພງກັນ. ທຸກຄົນຈະຮູ້ວ່າພວກເຈົ້າເປັນສິດຂອງເຮົາ ກໍຍ້ອນເຫັນວ່າພວກເຈົ້າມີຄວາມຮັກຕໍ່ກັນແລະກັນນັ້ນເອງ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ວາຈາຂອງພຣະເຈົ້າວັນນີ້ເລົ່າເຖິງເວລາທີ່ພຣະເຢຊູເຈົ້າຈະຮັບທົນທໍລະມານແລະຕາຍ. ເພາະສະນັ້ນ, ພຣະເຢຊູເຈົ້າຈຶ່ງກ່າວວ່າ: « ດຽວນີ້ບຸດແຫ່ງມະນຸດໄດ້ຮັບກຽດມຸງຄຸນແລ້ວ ». ແຕ່ກຽດມຸງຄຸນທີ່ພຣະເຢຊູເຈົ້າກ່າວມານີ້ແມ່ນຫຍັງ? ກຽດມຸງຄຸນຂອງພຣະເຢຊູເຈົ້າຄືການທໍາຕາມນໍ້າພຣະໄທຂອງພຣະບິດາຜູ້ຊົງໃຊ້ພຣະອົງມາໃນໂລກນີ້. ແລະນໍ້າພຣະໄທຂອງພຣະບິດາເຈົ້າຄືໃຫ້ທຸກຄົນເຊື່ອໃນພຣະເຢຊູພຣະບຸດຂອງພຣະອົງແລະໄດ້ຮັບຄວາມຮອດ. ຍ້ອນພຣະເຢຊູເຈົ້າມາໃນໂລກນີ້ບໍ່ແມ່ນເພື່ອຕັດສິນໂລກ ແຕ່ເພື່ອຊ່ວຍທຸກຄົນໃຫ້ຮອດຊີວິດ. ດ້ວຍເຫດນີ້, ພຣະອົງຈໍາຕ້ອງສະລະຊີວິດຂອງຕົນເພື່ອພວກເຮົາ. ເພາະບໍ່ມີຄວາມຮັກໃດຍິ່ງໃຫຍ່ເທົ່າການສະລະຊີວິດຂອງຕົນເພື່ອຄົນທີ່ເຮົາຮັກ. ຍ້ອນພຣະເຢຊູເຈົ້າຮັກພວກເຮົາພຣະອົງຈຶ່ງປາດຖະໜາໃຫ້ພວກເຮົາເອົາແບບຢ່າງພຣະອົງຄືໃຫ້ພວກເຮົາຮັກກັນແລະກັນ. ຄວາມຮັກແມ່ນການບໍ່ເຫັນແກ່ຕົວ, ບໍ່ເອົາປຽບຄົນອື່ນ, ບໍ່ຄຽດຊັງຄົນອື່ນ, ບໍ່ມັກໃຫຍ່ໃຝ່ສູງ. ແຕ່ຄວາມຮັກແມ່ນການໃຫ້ອະໄພ, ການສຸພາບຖ່ອມຕົນ, ການຮູ້ຈັກແບ່ງປັນ, ການຫວັງດີຕໍ່ຄົນອື່ນ. ສິ່ງເຫລົ່ານີ້, ພຣະເຢຊູເຈົ້າໄດ້ກະທໍາສໍາເລັດຜ່ານເສັ້ນທາງແຫ່ງການທໍລະມານແລະຕາຍຂອງພຣະອົງເພື່ອພວກເຮົາ. ຫລືເວົ້າອີກຢ່າງ, ພຣະເຢຊູເຈົ້າໄດ້ກະທໍາໃຫ້ກຽດມຸງຄຸນຂອງພຣະບິດາເຈົ້າສໍາເລັດໄປໃນຕົວພຣະອົງເອງ. ແລະພຣະອົງກໍປາດຖະໜາໃຫ້ກຽດມຸງຄຸນຂອງພຣະບິດາເຈົ້າໄດ້ແຜ່ຂະຫຍາຍໄປຜ່ານທາງພວກເຮົາແຕ່ລະຄົນ, ຜູ້ເປັນສິດຂອງພຣະອົງ. ດັ່ງນັ້ນ, ທຸກຄັ້ງທີ່ພວກເຮົາຮັກແພງຊຶ່ງກັນແລະກັນແລະຮັກແພງຜູ້ທີ່ບໍ່ຫວັງດີຕໍ່ພວກເຮົາແມ່ນພວກເຮົາໄດ້ທໍາໃຫ້ກຽດມຸງຄຸນຂອງພຣະບິດາເຈົ້າປະຈັກແຈ້ງໃນຕົວຂອງພວກເຮົາ.

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດຊ່ວຍລູກໃຫ້ຮູ້ຈັກເດີນຕາມເສັ້ນທາງພຣະອົງແລະເອົາແບບຢ່າງພຣະອົງດ້ວຍການທໍາໃຫ້ກຽດມຸງຄຸນຂອງພຣະບິດາເຈົ້າໄດ້ຮຸ່ງເຮືອງໄປຢູ່ໃນແຜ່ນດິນນີ້, ຜ່ານທາງຄວາມຮັກແລະການໃຫ້ອະໄພຊຶ່ງກັນແລະກັນ ເພາະພຣະເຈົ້າເປັນອົງແຫ່ງຄວາມຮັກ. ແລະພຣະບັນຍັດເອກໃນບັນດາພຣະບັນຍັດກໍແມ່ນບັນຍັດແຫ່ງຮັກນັ້ນເອງ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ